ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 07 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 24 ກໍລະກົດ 2017

ສຳນັກງານ ຄຄຊ
ລົງ ຮັບ ເລກທີ 0791
ວັນທີ 24 JUL 2017
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ມິຖຸນາ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

### ພາກທີ I

### ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

**I. ວຽກງານການເມືອງ-ແນວຄິດ**

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ມິຖຸນາ 2017 ແລະ ທິດທາງແຜນການໃນເດືອນ ກໍລະກົດ 2017 ດັ່ງລາຍລະອຽດລຸ່ມນີ້:

**II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.**

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ມິຖຸນາ 2017; ກອງປະຊຸມປຶກສາຫາລືທົບທວນຄືນແຜນການລະດົມແຫຼ່ງທຶນ ເພື່ອດຸ່ນດ່ຽງງົບປະມານ ປະຈຳປີ 2017 ຮ່ວມກັບກະຊວງການເງິນ; ກອງປະຊຸມປຶກສາຫາລືກ່ຽວກັບການສົ່ງເສີມການປູກກາເຟ, ການຜະລິດເຂົ້າ ແລະ ການສົ່ງເສີມຟາມລ້ຽງໝູ; ຕິດຕາມທ່ານ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການເງິນ ແລະ ປະທານ ຄຄຊ ເດີນທາງໄປຢ້ຽມຢາມຕະຫຼາດຫຼັກຊັບ ສ.ເກົາຫຼີ ທີ່ປະເທດ ສ.ເກົາຫຼີ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມດຳເນີນຊີວິດການເມືອງ ເພື່ອປັບປຸງປົວແປງພາຍໃນພັກຂອງອົງຄະນະພັກ ທຫລ; ກອງປະຊຸມປຶກສາຫາລືກ່ຽວກັບສະພາບອັດຕາແລກປ່ຽນ; ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍລະບົບຊຳລະສະສາງແຫ່ງຊາດ; ກອງປະຊຸມປຶກສາຫາລືກ່ຽວກັບວິທີການ ແລະ ມາດຕະການແກ້ໄຂບັນຫາບໍລິສັດພິເອັສ ທີ່ດຳເນີນທຸລະກິດບໍ່ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ; ກອງປະຊຸມປຶກສາຫາລືການເຮັດທົດລອງການບໍລິການທຸລະກຳການເງິນຜ່ານໂທລະສັບມືຖືຂອງບໍລິສັດສະຕາໂທລະຄົມ; ກອງປະຊຸມປຶກສາຫາລືວຽກງານຮ່ວມມືກັບຕະຫຼາດຫຼັກຊັບ ສ.ເກົາຫຼີ; ກອງປະຊຸມປຶກສາຫາລືກ່ຽວກັບ ການນຳໃຊ້ບັດເອທີເອັມຮ່ວມກັນຂອງບັນດາທະນາຄານທຸລະກິດ ໃນ ສປປ ລາວ; ກອງປະຊຸມຄະນະຊີ້ນຳລວມຂອງຄະນະສະເພາະກິດ ເພື່ອປະເມີນຄວາມສ່ຽງລະດັບຊາດກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ;
- ສຳເລັດການຈັດສຳມະນາຕ່າງໆ: ຈັດຝຶກອົບຮົມຮ່ວມຕະຫຼາດຫຼັກຊັບແຫ່ງປະເທດໄທ ໃນຫົວຂໍ້: "ວຽກງານຕະຫຼາດທຶນສຳລັບຊື່ມວນຊົນ"; ຈັດສຳມະນາໃນຫົວຂໍ້: "ພາບລວມຕະຫຼາດທຶນໃນ ສປປ ລາວ";
- ສຳເລັດການຕ້ອນຮັບແຂກສາກົນເຂົ້າພົບປະຄະນະນຳ ທຫລ ມີທ່ານ ຜູ້ຕາງໜ້າທະນາຄານໂລກ; ຜູ້ບໍລິຫານຝ່າຍເສດຖະກິດມະຫາພາກ ແລະ ງົບປະມານປະຈຳພາກພື້ນອາຊີ-ປາຊີຟິກ; ຮອງປະທານທະນາຄານພັດທະນາອາຊີ; ຄະນະຜູ້ບໍລິຫານທະນາຄານກຸງໄທ ແລະ ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບ ສ.ເກົາຫຼີ.

## III. ສະພາບພື້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 6/2017, ສະພາບເສດຖະກິດໂລກໂດຍລວມຂະຫຍາຍຕົວດີຂຶ້ນ ຊຶ່ງທະນາຄານໂລກໄດ້ຄາດຄະເນການຂະຫຍາຍຕົວຂອງເສດຖະກິດໂລກ ຢູ່ໃນລະດັບ 2,7% ໃນປີ 2017 ແລະ 2,9% ໃນປີ 2018 ເນື່ອງຈາກວ່າການຄ້າ ແລະ ການຜະລິດທົ່ວໂລກມີການຂະຫຍາຍຕົວເພີ່ມຂຶ້ນ 4% ໃນປີນີ້ ໂດຍໄດ້ແຮງໜູນຈາກການສົ່ງອອກ-ນໍາເຂົ້າສິນຄ້າຈາກກຸ່ມປະເທດທີ່ພັດທະນາແລ້ວ ລວມທັງການໝູນວຽນທາງການຄ້າທີ່ສູງຂຶ້ນຂອງ ສປ. ຈີນ ທັງຂາອອກ ແລະ ຂາເຂົ້າ. ເຖິງຢ່າງໃດກໍຕາມ, ທະນາຄານໂລກ ຍັງໄດ້ເຕືອນວ່າທ່າອ່ຽງການຂະຫຍາຍຕົວທາງດ້ານເສດຖະກິດໂລກຍັງຄົງມີຄວາມສ່ຽງທີ່ຈະປະເຊີນກັບພາວະຖົດຖອຍ ຈາກການທີ່ມີຫຼາຍປະເທດຫັນມານໍາໃຊ້ນະໂຍບາຍກີດກັ້ນທາງການຄ້າ ແລະ ຄວາມບໍ່ແນ່ນອນຂອງນະໂຍບາຍເສດຖະກິດຂອງປະທານນາທິບໍດີ ສ. ອາເມລິກາ;
- ເງິນໂດລາອ່ອນຄ່າ 2,92% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີເປັນຕົ້ນ ດັດຊະນີພາກການຜະລິດ ຫຼຸດລົງ 1 ຈຸດ ໃນເດືອນ 5/2017 ຈາກເພີ່ມຂຶ້ນ 5,2 ຈຸດ ໃນເດືອນຜ່ານມາ ບວກກັບຕົວເລກການຂາຍເຮືອນໃໝ່ຫຼຸດລົງ 11,4% ໃນເດືອນ 4/2017 ຈາກເພີ່ມຂຶ້ນ 5,8% ໃນເດືອນຜ່ານມາ. ພ້ອມດຽວກັນນັ້ນ, ຕົວເລກດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຫຼຸດລົງເປັນ 117,9 ຈຸດ ໃນເດືອນ 5/2017 ຈາກ 119,4 ຈຸດ ໃນເດືອນ 4/2017 ແລະ ຕົວເລກດຸນການຄ້າຂາດດຸນເພີ່ມຂຶ້ນເປັນ 47,6 ຕື້ໂດລາ ໃນເດືອນ 4/2017 ຈາກຂາດດຸນ 45,3 ຕື້ໂດລາ ໃນເດືອນຜ່ານມາ;
- ລາຄານໍ້າມັນຫຼຸດລົງ 1,39% ຈາກ 49,61 ໂດລາ/ບາເຣວ ມາເປັນ 48,92 ໂດລາ/ບາເຣວ ເນື່ອງຈາກປະເທດກຸ່ມ OPEC ເລື່ອນເວລາການປັບຫຼຸດການຜະລິດນໍ້າມັນດິບອອກໄປອີກ 9 ເດືອນ. ພ້ອມດຽວກັນນັ້ນ, ສໍານັກງານດ້ານພະລັງງານຂອງ ສ. ອາເມລິກາ (EIA) ປະກາດຍອດເຫຼືອນໍ້າມັນດິບໃນສາງຂອງ ສ. ອາເມລິກາ ເພີ່ມຂຶ້ນ 3,3 ລ້ານບາເຣວ ມາຢູ່ໃນລະດັບ 513 ລ້ານບາເຣວ, ປະລິມານການສົ່ງອອກນໍ້າມັນດິບຂອງປະເທດໄນຈີເລຍ ກໍປັບຕົວເພີ່ມຂຶ້ນ 200.000-240.000 ບາເຣວ ມາຢູ່ທີ່ລະດັບ 1,8 ລ້ານບາເຣວຕໍ່ວັນ. ສ່ວນລາຄາຄໍາ ເພີ່ມຂຶ້ນ 0,71% ຈາກ 1.254,29 ໂດລາ/ອອນ ມາເປັນ 1.263,18 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອເກັງກໍາໄລ ແລະ ປ້ອງກັນຄວາມສ່ຽງຈາກການຜັນຜວນຂອງເສດຖະກິດ.

### 2. ສະພາບເງິນຕາພາຍໃນ.

- ອັດຕາເງິນເຟີ້ປະຈໍາເດືອນ 06/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,66% ເຊິ່ງອັດຕາເງິນເຟີ້ ໃນເດືອນ 05/2017 ແມ່ນຢູ່ໃນລະດັບ 1,07%;
- ຖານເງິນຕາປະຈໍາເດືອນ 06/2017 ເພີ່ມຂຶ້ນ 447,66 ຕື້ກີບ ຫຼື 1,22% ທຽບໃສ່ເດືອນ 05/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 18,73%. ປະລິມານເງິນ M2 ເພີ່ມຂຶ້ນ 1.778,89 ຕື້ກີບ ຫຼື 2,40% ທຽບໃສ່ເດືອນ 05/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12.333,59 ຕື້ກີບ ຫຼື 19,37%;
- ອັດຕາແລກປ່ຽນທົ່ວລະບົບໃນເດືອນ 6/2017 ທຽບເດືອນ 5/2017 ເໜັງຕີງໃນຂອບທີ່ກໍານົດໄວ້ເຫັນໄດ້ຈາກເງິນກີບອ່ອນຄ່າ 0,28% ທຽບເງິນໂດລາ ແລະ ອ່ອນຄ່າ 1,32% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າ 0,14% ທຽບກັບເງິນໂດລາ ແລະ ອ່ອນຄ່າ 4,41% ທຽບເງິນບາດ;
- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈໍາເດືອນ 06/2017 (12/5-12/06/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ເພີ່ມຂຶ້ນ 11,13% ຖ້າທຽບໃສ່ເດືອນ 5/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 72,12 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍເງິນບາດສຸດທິ 5.180 ລ້ານບາດ ຫຼື 161,53 ລ້ານໂດລາສະຫະລັດທຽບເທົ່າ ແຕ່ຊື້ເງິນໂດລາສຸດທິ 89,41 ລ້ານໂດລາສະຫະລັດ). ໃນນັ້ນ ທຫລ ໄດ້ດຸນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 66,80 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍເງິນໂດລາສຸດທິ 70,09 ລ້ານໂດລາສະຫະລັດ ແລະ ຂາຍເງິນ

- ສະກຸນເງິນໂດລາສະຫະລັດ ແລະ ເງິນບາດ: ບໍ່ມີການເຄື່ອນໄຫວ.

### 4.2 ການຊື້-ຂາຍພັນທະບັດ

- ໃນເດືອນ 06/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ 619 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 558 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 5 ຕື້ກີບ, ທະນາຄານພົງສະຫວັນ 6 ຕື້ກີບ ແລະ ທະນາຄານພັດທະນາລາວ 50 ຕື້ກີບ ແລະ ໄດ້ໄຖ່ຖອນພັນທະບັດຄືນ 569 ຕື້ກີບ ແລະ 20 ລ້ານໂດລາ. ໃນນັ້ນ, ໄຖ່ຖອນໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 558 ຕື້ກີບ ແລະ ກອງທຶນປົກປ້ອງຜູ້ຝາກເງິນ 11 ຕື້ກີບ ແລະ ໄຖ່ຖອນພັນທະບັດບ້ວງລະດົມທຶນໂດຍກົງ 20 ລ້ານໂດລາ ໃຫ້ທະນາຄານອຸດສະຫະກຳ ແລະ ການຄ້າຈີນ;

- ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.707 ຕື້ກີບ ແລະ 70 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 70 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.875 ຕື້ກີບ);

- ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ **06/2017** ມີການຈຳໜ່າຍພັນທະບັດ ທຫລ ໃຫ້ທະນາຄານແຫ່ງ ປະເທດຈີນ ຈຳນວນ 50 ລ້ານໂດລາ, ປະຈຸບັນມີຍອດເຫຼືອພັນທະບັດທີ່ຍັງບໍ່ໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.014, 28 ຈຸດ ຫຼຸດລົງ 0,26% ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 1,86 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 11,06 ຕື້ກີບ ຫຼຸດລົງ 95,96% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 50,80% ຂອງມູນຄ່າການຊື້-ຂາຍທັງໝົດ;

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.316 ກີບ/ຮຸ້ນ ເພີ່ມຂຶ້ນ 186 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 686.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,64 ຕື້ກີບ ເພີ່ມຂຶ້ນ 6,06 % ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 60,39% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.028 ກີບ/ຮຸ້ນ ຫຼຸດລົງ 64 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 499.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,51 ຕື້ກີບ ຫຼຸດລົງ 60,33% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 74,75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;

- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.548 ກີບ/ຮຸ້ນ ເພີ່ມຂຶ້ນ 148 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 639.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,82 ຕື້ກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ ກວມເອົາ 100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 1.923 ກີບ/ຮຸ້ນ ຫຼຸດລົງ 77 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 29.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 56,15 ລ້ານກີບ ຫຼຸດລົງ 84,68% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 2.994 ກີບ/ຮຸ້ນ ເພີ່ມຂຶ້ນ 113 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 7.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 23,65 ລ້ານກີບ ຫຼຸດລົງ 32,70% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ.

ບາດສຸດທິ 105.41 ລ້ານບາດ ຫຼື 3.29 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 22.04 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 18,14 ລ້ານໂດລາສະຫະລັດ ແລະ ເງິນບາດ 125,11 ລ້ານບາດ ຫຼື 3.90 ລ້ານໂດລາສະຫະລັດ);

ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 06/2017 (12/05-12/06/2017) ໄດ້ມີກະແສເງິນໄຫຼເຂົ້າຜ່ານລະບົບທະນາຄານສຸດທິ 116.82 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼເຂົ້າ ຈຳນວນ 816,71 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າຂອງວິສາຫະກິດ ຈຳນວນ 231 ລ້ານໂດລາສະຫະລັດ, ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດຈຳນວນ 144,28 ລ້ານໂດລາສະຫະລັດ, ຮັບເງິນກູ້ຢືມຂອງລັດຖະບານໂຄງການທາງລົດໄຟ ຈຳນວນ 95.45 ລ້ານໂດລາສະຫະລັດ, ທະນາຄານທຸລະກິດສາຂາຕ່າງປະເທດ ຝາກນຳ ທຫລ ຈຳນວນ 100 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼອອກຈຳນວນ 699,88 ລ້ານໂດລາສະຫະລັດ ຕົ້ນຕໍແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 382,79 ລ້ານໂດລາສະຫະລັດ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ຂອງທະນາຄານທຸລະກິດສາຂາຕ່າງປະເທດ ຈຳນວນ 21.86 ລ້ານໂດລາສະຫະລັດ.

## 3. ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ

ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/06/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 66.139.64 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 2,63%. ເງິນຝາກເປັນເງິນກີບເພີ່ມຂຶ້ນ 1.73% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47.51% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 3.46% ຊຶ່ງກວມເອົາ 52,49% ຂອງເງິນຝາກທັງໝົດ.

ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/06/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 62.095.81 ຕື້ກີບ ເພີ່ມຂຶ້ນ 1.04% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 48,48% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,52% ຂອງສິນເຊື່ອທັງໝົດ.

ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 124.41 ຕື້ກີບ ທຽບໃສ່ເດືອນຜ່ານມາເພີ່ມຂຶ້ນ 255,96%, ເກັບຕົ້ນທຶນໄດ້ 39.06 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 18,14% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້. ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 06/2017 ມີຈຳນວນ 3.002.43 ຕື້ກີບ ເທົ່າກັບ 90.20% ຂອງແຜນການ (3.328.31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 1.990,33 ຕື້ກີບ. ຈຸດສຸມລັດຖະບານ-ທ້ອງຖິ່ນ 291.40 ຕື້ກີບ. ບ້ານເຮັດທົດລອງ 3 ສ້າງ 288.90 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431.80 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ ມີຈຳນວນ 3.880 ສະບັບ ຫຼຸດລົງ 4,48% ເປັນເງິນຈຳນວນ 1.741.62 ຕື້ກີບ ຫຼຸດລົງ 13.63% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 146 ຄັ້ງ ເພີ່ມຂຶ້ນ 14.06% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 639,24 ຕື້ກີບ ເພີ່ມຂຶ້ນ 1.44% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/05-24/06/2017 ມີຈຳນວນ 13.902 ຄັ້ງ ລາຍລະອຽດມີດັ່ງນີ້:

ສະກຸນເງິນກີບ: ມີການເຄື່ອນໄຫວ 13.456 ຄັ້ງ ມີມູນຄ່າການໂອນ 4.194,07 ຕື້ກີບ ຫຼຸດລົງ 17,41% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 3.642 ຄັ້ງ. ໃນນັ້ນ ມີ 43 ພາກສ່ວນທີ່ເຮັດທຸລະກຳ (ທຫລ. ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

ກະຊວງການເງິນ: ມີການເຄື່ອນໄຫວ ຈຳນວນ 446 ຄັ້ງ ມີມູນຄ່າການໂອນ 431,91 ຕື້ກີບ ຫຼຸດລົງ 25,17%;

6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 325,55 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 20% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 212 ລ້ານໂດລາສະຫະລັດກວມເອົາ 65% ຂອງເງິນທັງໝົດ, ເງິນບາດ 3,81 ຕື້ບາດ ແລະ 9 ລ້ານປອນ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 276,72 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 41% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 243,71 ລ້ານໂດລາສະຫະລັດ ກວມເອົາ 88% ຂອງເງິນທັງໝົດ, ເງິນບາດ 1,11 ຕື້ບາດ, 85.635 ເອີໂຣ, 8.080 ຟຣັ່ງສະວິດ, 6.860 ປອນສະເຕລິງ, 10,76 ລ້ານເຢັນ, 32.935 ໂດລາແຄນນາດາ ແລະ 0,12 ລ້ານໂດລາອົດສະຕາລີ.

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງທະນາຄານຮ່ວມທຸລະກິດລາວ-ຫວຽດ ສາຂາຄຳມ່ວນ; ສຳເລັດການເກັບຄ່າຄຸ້ມຄອງປະຈຳປີ 2017 ຂອງທະນາຄານທຸລະກິດທົ່ວລະບົບ; ສຳເລັດອອກຂໍ້ຕົກລົງກ່າວເຕືອນທະນາຄານທຸລະກິດທີ່ລະເມີດຂໍ້ຕົກລົງວ່າດ້ວຍ ການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ; ສຳເລັດການລົງກວດກາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານເອເອັນແຊັດ ປະຈຳປີ 2016; ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສກຈບ ວາລີລັກ; ສກຈບ ສົມອຸດົມພັດທະນາ ແລະ ໂຮງຊວດຈຳ ລັກແວວ; ສຳເລັດການລົງກວດກາ ປະຈຳປີ 2016 ສະຖາບັນການເງິນຈຸລະພາກທີ່ຮັບຝາກ ທັງໝົດ 2 ແຫ່ງ ຄື: ສກຈຮ ເອກພັດທະນາ ແລະ ສກຈຮ ເພື່ອພັດທະນາແມ່ຍິງ ແລະ ຄອບຄົວ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທັງໝົດ 3 ແຫ່ງຄື: ສກຈບ ເພື່ອພັດທະນາ ແລະ ສົ່ງເສີມທຸລະກິດ, ສກຈບ ໄຊອຸດົມ ແລະ ສກຈບ ສະຫວັນຄຳ;

– ສຳເລັດບົດລາຍງານຕ່າງໆ ຄື: ບົດລາຍງານສະພາບອັດຕາແລກປ່ຽນ ແລະ ການສະໜອງເງິນຕາຕ່າງປະເທດຂອງລະບົບທະນາຄານ; ບົດໂຄງການສົ່ງເສີມການຊຳລະຄ່າສິນຄ້າ ແລະ ບໍລິການ ຂອງຫົວໜ່ວຍທຸລະກິດ ຜ່ານລະບົບທະນາຄານ ແລະ ເປັນເງິນກີບ; ບົດລາຍງານການສະຫຼຸບ ສັງລວມ ບັນດາມະຕິ, ຄຳສັ່ງ, ດຳລັດ, ຂໍ້ຕົກລົງຂອງລັດຖະບານ ແລະ ຄຳເຫັນຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ທີ່ຕິດພັນກັບຂະແໜງການທະນາຄານ;

– ສຳເລັດການອອກຂໍ້ຕົກລົງວ່າດ້ວຍການບັນຊີ ແລະ ການກວດສອບວຽກງານຫຼັກຊັບ ແລະ ຂໍ້ຕົກລົງວ່າດ້ວຍລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານຂອງບໍລິສັດຫຼັກຊັບ;

– ໄດ້ຮັບເງິນປອມ ປະເພດໃບ 50.000 ກີບ ຈຳນວນ 2 ໃບ ຈາກພະນັກງານທະນາຄານ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 10 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 584 ສະບັບ;

– ໃນທ້າຍເດືອນ 6/2017 ກອງປະຊຸມຄົບຄະນະບໍລິຫານງານຂອງອົງການຕ້ານການຟອກເງິນສາກົນ ໄດ້ມີມະຕິຮັບຮອງໃຫ້ ສປປ ລາວ ອອກຈາກບັນຊີສີມົ່ນ ຂອງອົງການຕ້ານການຟອກເງິນສາກົນ.

## ພາກທີ II

## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ດຳເນີນກອງປະຊຸມດຳເນີນຊີວິດການເມືອງ ເພື່ອປັບປຸງປົວແປງພາຍໃນພັກຂອງອົງຄະນະພັກ ທຫລ;

– ສືບຕໍ່ສະຫຼຸບລາຍງານການກວດກາການຈັດຕັ້ງປະຕິບັດແຜນງານ-ໂຄງການຂອງ ທຫລ ປະຈຳປີ 2016;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ຕິດຕາມການດັດແກ້ ແລະ ປັບປຸງລະບຽບພາຍໃນຂອງທະນາຄານຮ່ວມທຸລະກິດລາວ-ຫວຽດ ແລະ ທະນາຄານ ຊີໄອເອັມບີໄທ ຈຳກັດ ສາຂານະຄອນຫຼວງວຽງຈັນ;

– ສືບຕໍ່ຕິດຕາມການສົ່ງບົດລາຍງານຖານະການເງິນຂອງບໍລິສັດກວດສອບພາຍນອກ ປະຈຳປີ 2016 ແລະ ການເຜີຍແຜ່ຖານະການເງິນຂອງທະນາຄານທຸລະກິດ;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ ແລະ ຂໍ້ຕົກລົງວ່າດ້ວຍຕົນແທນຂຶ້ນທະບຽນຮຸ້ນກູ້; ພ້ອມກັນນັ້ນ, ກໍ່ຕິດຕາມການປັບປຸງກົດໝາຍວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ ເພື່ອສະເໜີຜ່ານກອງປະຊຸມລັດຖະບານໃນເດືອນ ກໍລະກົດ 2017;

– ກະກຽມຈັດກອງປະຊຸມຄະນະຮັບຜິດຊອບການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການປະຢັດລາຍຈ່າຍງົບປະມານ ຢູ່ຂົງເຂດທະນາຄານ;

– ກະກຽມເງື່ອນໄຂຕ່າງໆໃຫ້ແກ່ການເປີດສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງ ຊຽງຂວາງຢ່າງເປັນທາງການ;

– ກະກຽມປະກອບສ່ວນເຂົ້າຮ່ວມຈັດງານເປີດໂລກແຫ່ງການລົງທຶນ ປະຈຳປີ 2017 ໃນຫົວຂໍ້: "ທຸລະກິດຍືນຍົງສ້າງຖານະໝັ້ນຄົງໃນຕະຫຼາດທຶນ"

– ກະກຽມເງື່ອນໄຂການເປີດຮຽນທິດສະດີການເມືອງ-ການປົກຄອງ ປະຈຳປີ 2017;

– ກະກຽມຈັດຝຶກອົບຮົມໃນຫົວຂໍ້ "ເຕັກໂນໂລຊີທາງດ້ານການເງິນ (Fintech)"

– ສືບຕໍ່ກະກຽມການຈັດຕັ້ງເຜີຍແຜ່ດຳລັດ ແລະ ບົດແນະນຳກ່ຽວກັບການແຈ້ງຊັບສິນໃຫ້ພະນັກງານທົ່ວລະບົບທະນາຄານ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ ສົມພາວ ໄຟສິດ

ສົ່ງ:
- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມສັງລວມເສດຖະກິດ, ຫສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.